ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 16: Final Test

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# ຫົວບົດສອບເສັງທ້າຍພາກຮຽນ

**ວິຊາ: ວັນນະຄະດີພື້ນເມືອງລາວ ເວລາ 60 ນາທີ**
**ຊື່ ແລະນາມສະກຸນ.......................................................................**

**<u>ຄໍາຊີ້ແຈງ</u>**: ຈົ່ງຕອບຄໍາຖາມລຸ່ມນີ້ໃຫ້ຄົບຖ້ວນ.

**I. ພາກອັດຕະໄນ** (ຂໍ້ລະ 4 ຄະແນນ)

1. ວັນນະຄະດີພື້ນເມືອງລາວມີການຂະຫຍາຍຕົວແນວໃດ? (4 ຄະແນນ)

.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................

2. ວັນນະຄະດີພື້ນເມືອງລາວປະເພດຄໍາຮ້ອຍແກ້ວປະກອບມີຫຍັງແດ່? (4 ຄະແນນ)

.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................

3. ເທບນິຍາຍແມ່ນຫຍັງ? (4 ຄະແນນ)

.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................

4. ພື້ນສືບມີສີລະປະແນວໃດ? (4 ຄະແນນ)

.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................

5. ນິທານຊວນຫົວມີເນື້ອໃນສ່ອງແສງເຖິງຫຍັງແດ່? (4 ຄະແນນ)

.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com　　　　ໂທ: +85620 98003648

## II. ພາກປະລາໄນ (ຂໍ້ລະ 2 ຄະແນນ)

➢ **ຈົ່ງຂີດອ້ອມເອົາຄໍາຕອບທີ່ຖືກຕ້ອງທີ່ສຸດພຽງຂໍ້ດຽວຂອງແຕ່ລະຄໍາຖາມ:**

1. ຕົວລະຄອນປູ່ເຍີ ແມ່ນມີຢູ່ໃນບົດເລື່ອງໃດລຸ່ມນີ້:

ກ. ຜີພູຜີນໍ້າ　　ຂ. ເທບນິຍາຍ　　ຄ. ທ້າວຈັນທະພານິດ　　ງ. ພື້ນສືບ

2. ເລື່ອງ "ຂຸນບູລົມ" ແມ່ນຈັດຢູ່ໃນວັນນະຄະດີພື້ນເມືອງປະເພດໃດ?

ກ. ນິທານມະຫັດສະຈັນ　　ຂ. ເທບນິຍາຍ　　ຄ. ພື້ນສືບ　　ງ. ນິທານ

3. ເນື້ອໃນຕົ້ນຕໍຂອງນິທານມະຫັດສະຈັນສ່ອງແສງ:

ກ. ການຕໍ່ສູ້ຊົນຊັ້ນ　　ຂ. ການອອແຮງງານ　　ຄ. ຄວາມງົມງວາຍ　　ງ. ເພີນຈິດເຫຼືອເຊື່ອ

4. ສັດປະເພດໃດທີ່ສາມາດຮຽກເອົາຂວັນຂອງນາງງາໃນເລື່ອງ "ກໍາພ້າຜີນ້ອຍ" ຄືນມາໄດ້?

ກ. ແມງງອດ　　ຂ. ງູເຫົ່າ　　ຄ. ນົກເຄົ້າ　　ງ. ບ່າງລິ້ວ

5. ທ້າວ ພຸດທະເສນ ເອົາຫຍັງໃສ່ຕ່ຂອງນາງ ສິບສອງຈິ່ງຮຸ່ງແຈ້ງ?

ກ. ຫວ້ານ　　ຂ. ໝາກເວິ່ຮູ້ຫາວໝາກນາວຮູ້ໂຫ່　　ຄ. ເຫຼົ້າ　　ງ. ນໍ້າເຜີ້ງ

6. ຊຽງໝ້ຽງຕົວະພະຍາກິນຂີ້ແຮ້ງດ້ວຍວິທີໃດ?

ກ. ໃຊ້ສໍຂຽນ　　ຂ. ໃຊ້ຢາສີແຂ້ວ　　ຄ. ແກງຂີ້ແຮ້ງ　　ງ. ປີ້ງຂີ້ແຮ້ງ

7. ໃນນິທານເລື່ອງ "ຕາບອດຄໍາຊ້າງ" ມີຄົນຕາບອດທັງໝົດຈັກຄົນ?

ກ. 2 ຄົນ　　ຂ. 4 ຄົນ　　ຄ. 6 ຄົນ　　ງ. 8 ຄົນ

8. ຂໍ້ໃດລຸ່ມນີ້ແມ່ນຄວາມໝາຍຂອງນິທານສັດ?

ກ. ແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງ ທີ່ພັນລະນາເຖິງສັດ ແລະ ຊີວິດຂອງສັດ.

ຂ. ເປັນເລື່ອງເລົ່າພື້ນເມືອງທີ່ມີລັກສະນະພິເສດ ແລະ ເອກະລັກ ເຊິ່ງມີຄວາມແຕກຕ່າງກັບເລື່ອງເລົ່າພື້ນ ເມືອງປະເພດອື່ນໆ.

ຄ. ນິທານສັດມີເຄົ້າມາຈາກການອອກແຮງງານ ແລະ ການດໍາລົງຊີວິດຂອງຄົນເຮົາແຕ່ສະໄໝບູຮານ.

ງ. ແມ່ນການປະດິດແຕ່ງທີ່ສະຫຼາດຫຼັກແຫຼມທີ່ສຸດຂອງປະຊາຊົນຜູ້ອອກແຮງງານ.

9. ໃນເລື່ອງ "ເສືອເຖົ້າຈໍາສິນ" ແມ່ນສັດປະເພດໃດທີ່ກາຍເປັນອາຫານໃຫ້ແກ່ເສືອເຖົ້າ?

ກ. ກະຕ່າຍ　　ຂ. ນົກກະຈອກ　　ຄ. ເຫງັນ　　ງ. ກົບ

10. ໃນເລື່ອງ "ຊ້າງກັບນົກກະຈອກພ້າ" ແມ່ນສັດປະເພດໃດທີ່ໄປຮ້ອງຢູ່ປາກເຫວເຮັດໃຫ້ຊ້າງຫຼົງເຊື່ອຈິ່ງຕົກເຫວຕາຍ?

ກ. ກະຕ່າຍ　　ຂ. ນົກກະຈອກ　　ຄ. ຄັນຄາກ　　ງ. ກົບ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

**ຂະໜານຕອບ**

**I. ພາກອັດຕະໄນ**

1. ວັນນະຄະດີພື້ນເມືອງລາວຄົງຕົວ ແລະຂະຫຍາຍ ຕົວໃນໝູ່ປະຊາຊົນ ໂດຍຜ່ານຮູບການສະແດງຕ່າງໆທີ່ສອດຄ່ອງ ຄື ປະເພດຄຳຮ້ອຍແກ້ວໃຊ້ຮູບການເລົ່າເລື່ອງ, ປະເພດຄຳຮ້ອຍກອງໃຊ້ຮູບການຂັບລຳ.
2. ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍແກ້ວປະກອບມີ: ເທບນິຍາຍ, ພື້ນສືບ, ນິທານມະຫັດສະຈັນ, ນິທານຊວນຫົວ, ແລະ ນິທານສັດ.
3. ເທບນິຍາຍແມ່ນເລື່ອງເລົ່າພື້ນເມືອງທີ່ພັນລະນາ ຫຼື ເລົ່າເຖິງການປະພຶດ, ການເຄື່ອນໄຫວຂອງ ຕົວລະຄອນແຖນ, ອິນ, ພົມ ແລະ ຜີສາງ ຕາມແນວຄິດຂອງຄົນບູຮານ.
4. ສິລະປະຂອງພື້ນສືບ ມີລັກສະນະເວົ້າໂຍກ ແລະ ເສີມສ້າງດ້ວຍຕົວລະຄອນທີ່ມີຊີວິດຊີວາ ເພື່ອໃຫ້ຜູ້ອ່ານ, ຜູ້ຟັງຈັບອົກຈັບໃຈ ແລ້ວຈື່ຈຳເຫດການຂອງຕົວລະຄອນໃນເລື່ອງໄດ້ດີ ເພື່ອນຳມາເລົ່າສືບຕໍ່ກັນໄປ.
5. ນິທານຊວນຫົວສ່ອງແສງເຖິງບັນຫາຕ່າງໆເຊັ່ນ: ສ່ອງແສງການດຳລົງຊີວິດ, ການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ; ສ່ອງແສງການຕຳນິຕິຕຽນການກະທຳທີ່ບໍ່ດີຂອງຄູບາອາຈານ, ພໍ່ຄ້າຊາວຂາຍ; ນິທານຊວນຫົວແມ່ນອາວຸດທີ່ແຫຼມຄົມຂອງປະຊາຊົນ; ສ່ອງແສງເຖິງຄວາມສະຫຼາດ ສະຫຼຽວຂອງປະ ຊາຊົນ.

**II. ພາກປະລາໄນ**

1. ຂ
2. ຄ
3. ກ
4. ງ
5. ຂ
6. ກ
7. ຄ
8. ຄ
9. ກ
10. ງ